**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 26 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ສານປະຊາຊົນສູງສຸດ

- ອີງຕາມ ລັດຖະທຳມະນູນ ສະບັບປີ 2015, ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ມາດຕາ 59 ຂໍ້ 03;
- ອີງຕາມ ບົດລາຍງານ ຂອງ ສານປະຊາຊົນສູງສຸດ ສະບັບເລກທີ 433/ສປປສ ລົງວັນທີ 03 ພະຈິກ 2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ ຂອງ ບັນດາສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານຂອງ ສານປະຊາຊົນສູງສຸດ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX, ວັນທີ 08 ພະຈິກ 2021.

## ກອງປະຊຸມ ຕົກລົງ

**ມາດຕາ 1 ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ 9 ເດືອນ ປະຈຳປີ 2021 ແລະ ວຽກງານ 03 ເດືອນທ້າຍປີ 2021 ຂອງ ສານປະຊາຊົນສູງສຸດ**

ກອງປະຊຸມ ສະແດງຄວາມຊົມເຊີຍ ສານປະຊາຊົນສູງສຸດ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແລະ ກົດໝາຍ ໃນເງື່ອນໄຂທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຮ້າຍແຮງຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ແຕ່ດ້ວຍຄວາມຮັບຜິດຊອບການເມືອງສູງ ຂອງ ສານປະຊາຊົນສູງສຸດ ໃນ 9 ເດືອນຜ່ານມາ ສາມາດຈັດຕັ້ງປະຕິບັດແຜນວຽກງານຈຸດສຸມ ປີ 2021 ສຳເລັດໃນຫຼາຍດ້ານ ເປັນຕົ້ນ: ໄດ້ສ້າງ ແລະ ປັບປຸງ ກົດໝາຍ, ນິຕິກຳໃຕ້ກົດໝາຍ; ປັບປຸງກົງຈັກການຈັດຕັ້ງ, ບັນຈຸສັບຊ້ອນ ຜູ້ພິພາກສາ ແລະ ພະນັກງານຂອງສານ; ຍົກລະດັບທິດສະດີ, ວິຊາສະເພາະ, ຈັນຍາບັນ, ຈັນຍາທຳ ໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານ; ປັບປຸງແບບແຜນວິທີເຮັດວຽກ ແລະ ກົນໄກການດຳເນີນຄະດີ; ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ມີຄຸນນະພາບສູງຂຶ້ນ.

ຄຽງຄູ່ກັນນັ້ນ ກອງປະຊຸມເຫັນວ່າ ຍັງມີບາງດ້ານທີ່ ສານປະຊາຊົນ ຕ້ອງໄດ້ເອົາໃຈໃສ່ສືບຕໍ່ແກ້ໄຂ ເປັນຕົ້ນ: ການພິຈາລະນາແກ້ໄຂຄະດີຂອງສານແຕ່ລະຂັ້ນ ບໍ່ທັນບັນລຸຄາດໝາຍຕາມແຜນການກຳນົດໄວ້ 85%, ມີບາງກໍລະນີ ຍັງບໍ່ທັນຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ອັດຕາ ການຂໍລົບລ້າງ ກອມເອົາ ອັດຕາສ່ວນສູງເຖິງ 56,72% ຂອງຈຳນວນຄະດີທີ່ສານຂັ້ນອຸທອນ ພິພາກສາ ຊຶ່ງບໍ່ທັນບັນລຸຄາດໝາຍວາງໄວ້ ຄືບໍ່ໃຫ້ເກີນ 25%; ການຕີລາຄາປະເມີນຜົນ ຜູ້ພິພາກສາ ດີ-ເກັ່ງ ບໍ່ບັນລຸຕາມແຜນການກຳນົດໄວ້ 25% ຂອງຈຳນວນ ຜູ້ພິພາກສາທັງໝົດ; ການຕັດສີນ ໂດຍຜູ້ພິພາກສາຜູ້ດຽວ ຕາມມາດຕາ 13 ຂອງກົດໝາຍ ວ່າດ້ວຍ ສານປະຊາຊົນ ສະບັບປີ 2017 ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ; ຄຳຕັດສີນ, ຄຳພິພາກສາຂອງສານຈຳນວນໜຶ່ງ ການວິນິດໄສ, ຊີ້ແຈ້ງເຫດຜົນ ແລະ ການຕອບແກ້ຄຳຮ້ອງຟ້ອງ ຫຼື ຄຳແກ້ຟ້ອງ ຂອງຄູ່ຄວາມ ຍັງບໍ່ທັນຄົບຖ້ວນ ແລະ ພາວະວິໄສ.

ສຳລັບວຽກງານ 03 ເດືອນທ້າຍປີ 2021, ກອງປະຊຸມ ສະເໜີໃຫ້ ສານປະຊາຊົນສູງສຸດ ສືບຕໍ່ສູ້ຊົນ ຈັດຕັ້ງປະຕິບັດ ບັນດາຄາດໝາຍ ແລະ ວຽກງານຈຸດສຸມ ໃຫ້ສຳເລັດ ຕາມແຜນການປີ 2021 ທີ່ກຳນົດໄວ້ໃນ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 15/ສພຊ ລົງວັນທີ 05 ພະຈິກ 2020.

**ມາດຕາ 2 ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ສານປະຊາຊົນສູງສຸດ**

ກອງປະຊຸມ ເຫັນດີຮັບຮອງເອົາບັນດາເນື້ອໃນ ທີ່ໄດ້ກຳນົດໄວ້ໃນຄາດໝາຍສູ້ຊົນ ແລະ ທິດທາງ ແຜນການຈຸດສຸມ ປະຈຳປີ 2022 ຂອງສານປະຊາຊົນສູງສຸດ, ແຕ່ກອງປະຊຸມສະເໜີໃຫ້ ສານປະຊາຊົນສູງສຸດ ເອົາໃຈໃສ່ ດັ່ງນີ້:

1. ຍົກສູງຄຸນນະພາບຂອງການດຳເນີນຄະດີຢູ່ສານຂັ້ນຕົ້ນໃຫ້ບັນລຸ 85% ຂຶ້ນໄປຂອງ ຄະດີທັງໝົດ ທີ່ເຂົ້າມາສານ, ອັດຕາການຂໍອຸທອນ ບໍ່ໃຫ້ເກີນ 15% ແລະ ເຮັດໃຫ້ອັດຕາການຂໍລົບລ້າງໜ້ອຍລົງ ຂອງຈຳນວນຄະດີທັງໝົດທີ່ສານໄດ້ພິພາກສາ ໂດຍສົມທຽບໃສ່ປີຜ່ານມາ; ພ້ອມກັນນີ້, ຕ້ອງສູ້ຊົນ ເຮັດໃຫ້ການພິຈາລະນາຄະດີ ຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ ຮັບປະກັນຄຸນນະພາບ, ຖືກຕ້ອງຕາມ ລັດຖະທຳມະນູນ ແລະ ກົດໝາຍ;
2. ເອົາໃຈໃສ່ປັບປຸງ ແລະ ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ ແລະ ຈັນຍາທຳ, ຄວາມຮູ້, ຄວາມສາມາດ ແບບມືອາຊີບ ຂອງ ຜູ້ພິພາກສາ ແລະ ພະນັກງານຂອງສານ ປະຊາຊົນ ເຮັດໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານ ມີນ້ຳໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ; ການແກ້ໄຂຄະດີ ໃຫ້ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ມີປະສິດທິຜົນ; ການຕີລາຄາ ປະເມີນຜົນ ຜູ້ພິພາກສາດີ-ເກັ່ງ ໃຫ້ໄດ້ 25% ຂຶ້ນໄປຂອງ ຜູ້ພິພາກສາທັງໝົດ;
3. ສ້າງ, ປັບປຸງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຈຳນວນ 02 ສະບັບ (ກົດໝາຍ ວ່າດ້ວຍ ການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍ ສານປະຊາຊົນ) ແລະ ອອກນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 10 ສະບັບຂຶ້ນໄປ;
4. ປັບປຸງກົງຈັກການຈັດຕັ້ງ, ຂະຫຍາຍການຈັດຕັ້ງສານປະຊາຊົນເຂດ ໃຫ້ໄດ້ 02 ແຫ່ງຂຶ້ນໄປ; ບັນຈຸສັບຊ້ອນ ບຸກຄະລາກອນ ຂອງສານປະຊາຊົນ ເຂົ້າໃສ່ກົງຈັກການຈັດຕັ້ງຂອງສານແຕ່ລະຂັ້ນ ໃຫ້ສາມາດຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນແຕ່ລະໄລຍະ; ເຂັ້ມງວດໃນການສອບເສັງ, ການສະເໜີແຕ່ງຕັ້ງ, ເລື່ອນຊັ້ນ ແລະ ຂັ້ນ ຜູ້ພິພາກສາ ໃຫ້ມີ ຄຸນນະພາບຫຼາຍຂຶ້ນກວ່າເກົ່າ.

**ມາດຕາ 3 ຮັບຮອງເອົາ ບັນດາມາດຕະການຈັດຕັ້ງປະຕິບັດ ຂອງ ສານປະຊາຊົນສູງສຸດ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 06 ມາດຕະການຈັດຕັ້ງປະຕິບັດ ທີ່ໄດ້ກໍານົດໃນບົດລາຍງານຂອງສານປະຊາຊົນສູງສຸດ, ແຕ່ກອງປະຊຸມສະເໜີໃຫ້ ສານປະຊາຊົນສູງສຸດ ແລະ ລັດຖະບານ ເອົາໃຈໃສ່ບາງມາດຕະການ ດັ່ງນີ້:

1. **ສານປະຊາຊົນສູງສຸດ**

1.1. ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກົມການເມືອງສູນກາງພັກ ວ່າດ້ວຍ ການຍົກສູງຄຸນນະພາບການດໍາເນີນຄະດີ ຕາມຂະບວນການຍຸຕິທໍາ ສະບັບເລກທີ 112/ກມສພ ລົງວັນທີ 02 ມິຖຸນາ 2020, ມະຕິຂອງ ກອງປະຊຸມໃຫຍ່ອົງຄະນະພັກ ຂອງສານປະຊາຊົນສູງສຸດ ຄັ້ງທີ IV ແລະ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ເປັນວຽກງານອັນລະອຽດຂອງສານປະຊາຊົນໃນແຕ່ລະຂັ້ນ, ນໍາພາ-ຊີ້ນໍາ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທໍາ ຕາມພາລະບົດບາດຂອງຕົນ;

1.2. ເພີ່ມທະວີການຕິດຕາມກວດກາ ການປະພຶດ ແລະ ການປະຕິບັດໜ້າທີ່ ຂອງຜູ້ພິພາກສາ ແລະພະນັກງານຂອງສານແຕ່ລະຂັ້ນ ໃຫ້ເປັນປົກກະຕິ ຕໍ່ເນື່ອງ, ຍ້ອງຍໍຕໍ່ຜູ້ມີຜົນງານດີເດັ່ນ ແລະເດັດຂາດລົງວິໄນຕໍ່ຜູ້ລະເມີດກົດໝາຍ ຢ່າງເຂັ້ມງວດ ແລະ ທັນເວລາ; ພ້ອມທັງປັບປຸງກົນໄກ,ແບບແຜນ ແລະ ວິທີເຮັດວຽກ ໃນລະບົບກົງຈັກຂອງສານ ໃຫ້ມີຄວາມສອດຄ່ອງ, ໜັກແໜ້ນ,ເຂັ້ມແຂງ, ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນ ໄດ້ຢ່າງຄົບຖ້ວນ ຕາມທີ່ກໍານົດໄວ້ໃນກົດໝາຍ;

1.3. ເພີ່ມທະວີການປະຕິບັດກົນໄກການປະສານສົມທົບ ລະຫວ່າງ ສານປະຊາຊົນສູງສຸດ ກັບ ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທໍາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດໍາເນີນຄະດີ ຕາມຂະບວນຍຸຕິທໍາ ໃຫ້ມີຄວາມກົມກຽວ,ຖືກຕ້ອງ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມກົດໝາຍໄດ້ກໍານົດໄວ້;

1.4. ສ້າງເງື່ອນໄຂໃຫ້ທະນາຍຄວາມໄດ້ເຂົ້າຮ່ວມ ໃນການດໍາເນີນຄະດີ ຂອງສານປະຊາຊົນແຕ່ລະຂັ້ນຕາມກົດໝາຍວ່າດ້ວຍ ທະນາຍຄວາມແຫ່ງ ສປປ ລາວ;

1.5. ເອົາໃຈໃສ່ຄົ້ນຄວ້າ ແລະ ຫັນການເຄື່ອນໄຫວວຽກງານຂອງສານປະຊາຊົນ ໄປສູ່ທັນສະໄໝເທື່ອລະກ້າວ ດ້ວຍການນໍາໃຊ້ ວິທະຍາສາດ-ເຕັກໂນໂລຊີ ເພື່ອເຮັດໃຫ້ການດໍາເນີນຄະດີຂອງສານປະຊາຊົນ ຖືກຕ້ອງ, ພາວະວິໄສ ແລະ ມີຜົນສັກສິດ.

2. **ໃຫ້ລັດຖະບານ** ພິຈາລະນາ ແລະ ສ້າງເງື່ອນໄຂ ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວວຽກງານ ຂອງສານປະຊາຊົນ ເປັນຕົ້ນ: ການສະໜອງດ້ານງົບປະມານ, ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນເຕັກນິກ ທີ່ຈໍາເປັນໃຫ້ແກ່ສານປະຊາຊົນ ເພື່ອສາມາດປະຕິບັດໜ້າທີ່ການເມືອງຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ມອບໃຫ້ ສານປະຊາຊົນສູງສຸດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

ມອບໃຫ້ ລັດຖະບານ ຊີ້ນໍາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;

ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ຂອງ ສະພາແຫ່ງຊາດ, ຄະນະສະມາຊິກ ສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ. ໃນນັ້ນ ກຳມາທິການ ຍຸຕິທຳ ເປັນໃຈກາງ ແລະ ເປັນເຈົ້າການປະສານງານ ໃນການຕິດຕາມ, ຊຸກຍູ້ ແລະ ກວດກາປະເມີນຜົນ ການປະຕິບັດມະຕິສະບັບນີ້.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**